# ຂໍ້ຕົກລົງ

ວ່າດ້ວຍການຄຸ້ມຄອງທຸລະກິດພັດຕະຄານ,

ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ

ສະບັບ ເລກທີ 059/ອທຊ, ລົງວັນທີ26/02 /07.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*******************

ສໍານັກງານນາຍົກລັດຖະມົນຕີ

ອົງການທ່ອງທ່ຽວແຫ່ງຊາດ

ເລກທີ 059/ອທຊ

ນະຄອນຫລວງວຽງຈັນ, ວັນທີ 26 FEB 2007

# ຂໍ້ຕົກລົງ

## ວ່າດ້ວຍການຄຸ້ມຄອງທຸລະກິດ ພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ

- ອີງຕາມກົດໝາຍວ່າດ້ວຍການທ່ອງທ່ຽວ ສະບັບເລກທີ 10/ສພຊ, ລົງວັນທີ 09/11/2005.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 91/ນຍ, ລົງວັນທີ 30/06/2004 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການທ່ອງທ່ຽວແຫ່ງຊາດ.

ເພື່ອເຮັດໃຫ້ການຄຸ້ມຄອງບັນດາທຸລະກິດພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມທົ່ວປະເທດເຄື່ອນໄຫວສອດຄ່ອງກັບລະບຽບກົດໝາຍ ແລະ ໄດ້ມາດຕະຖານການບໍລິການທີ່ຂະແໜງການທ່ຽວຊີ້ອງວາງອອກ, ແນໃສ່ຮັບປະກັນຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ບໍລິການນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ດ້ວຍປະສິດທິຜົນ ແລະ ຄຸນນະພາບສູງ ພ້ອມທັງຮັບປະກັນຄວາມປອດໄພໃຫ້ແກ່ຜູ້ທີ່ເຂົ້າໄປຊົມໃຊ້ການບໍລິການໄດ້ເປັນຢ່າງດີ.

## *ໝວດທີ I*

## ຫລັກການລວມ

ມາດຕາ 1: ນິຍາມ

1.1. ທຸລະກິດພັດຕະຄານ, ຮ້ານອາຫານ, ສວນອາຫານ ແມ່ນສະຖານທີ່ບໍລິການອາຫານການກິນເປັນຕົ້ນຕໍ ພ້ອມທັງບໍລິການເຄື່ອງດື່ມເປັນສຳຮອງບົນພື້ນຖານການໃຊ້ຈ່າຍຄ່າບໍລິການ ຕາມເງື່ອນໄຂ ແລະ ລະດັບບໍລິການທີ່ແຕກຕ່າງກັນ.

1.2. ຮ້ານກິນດື່ມ ແມ່ນສະຖານທີ່ບໍລິການເຄື່ອງດື່ມເປັນຕົ້ນຕໍ ພ້ອມທັງບໍລິການອາຫານເບົາເປັນສຳຮອງບົນພື້ນຖານການໃຊ້ຈ່າຍຄ່າບໍລິການຕາມເງື່ອນໄຂ ແລະ ລະດັບບໍລິການທີ່ແຕກຕ່າງກັນ.

ມາດຕາ 2. ຫລັກການທົ່ວໄປໃນການສ້າງຕັ້ງພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ.

2.1. ພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ ຕ້ອງໄດ້ຂຶ້ນທະບຽນທຸລະກິດ ແລະ ທະບຽນອາກອນ ນຳພະແນກການຄ້າ, ການເງິນປະຈຳແຂວງ, ນະຄອນຫລວງວຽງຈັນ ທີ່ຕົນຂຶ້ນກັບ ພາຍຫຼັງໄດ້ຮັບໃບອະນຸຍາດດຳເນີນທຸລະກິດນຳ ອົງການທ່ອງທ່ຽວແຫ່ງຊາດ, ພະແນກ / ຫ້ອງການ

ທ່ອງທ່ຽວປະຈຳ ແຂວງ, ນະຄອນຫລວງວຽງຈັນ ແລະ ຫ້ອງການທ່ອງທ່ຽວເມືອງ ທີ່ຕົນຂຶ້ນກັບ ໂດຍອີງຕາມຂະໜາດ, ລະດັບການລົງທຶນ ແລະ ການບໍລິການ ທີ່ ໄດ້ລະບຸ ໄວ້ຢູ່ໃນຂໍ້ຕົກລົງສະບັບນີ້.

2.2. ພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະຮ້ານກິນດື່ມທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງແລ້ວ ຫາກມີຈຸດປະສົງ ຈະປະກອບສິ່ງອຳນວຍຄວາມສະດວກເພີ່ມເຕີມ ເພື່ອຕອບສະໜອງ ໃຫ້ແຂກຄົນທີ່ມາຊົມໃຊ້ການບໍລິການໃນສະຖານທີ່ຂອງຕົນເຊັ່ນ:ດົນຕີພື້ນເມືອງ, ດົນຕີສາກົນ, ເອເລັກໂທນ, ເທບ,ຊີດີ, ວີດີໂອ, ໂທລະພາບ ແລະ ຄາລາໂອເກະ ຕາມລັກສະນະ ແລະ ລະດັບການບໍລິການນັ້ນ, ຕ້ອງໄດ້ຮັບອະນຸຍາດນຳຂະແໜງການທີ່ກ່ຽວຂ້ອງເສັຍກ່ອນ ແຕ່ຕ້ອງຮັບປະກັນບໍ່ໃຫ້ມີສຽງລົບກວນຜູ້ອື່ນ ທີ່ຢູ່ບໍລິເວນໃກ້ຄຽງ, ຮັກສາອານາໄມໃຫ້ສະອາດຈົບງາມ, ອາກາດຖ່າຍເທດີ ແລະ ມີລະບົບແສງສະຫວ່າງຢ່າງພຽງພໍ ( ບໍ່ມືດຈົນເກີນໄປ ).

2.3. ພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ ທີ່ໄດ້ຮັບອະນຸຍາດດຳເນີນ ທຸລະກິດຖືກຕ້ອງແລ້ວຕ້ອງແຈ້ງການໃຫ້ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ໃນການນຳໃຊ້ຜູ້ອອກແຮງງານ ແລະ ມີສັນຍາຈ້າງແຮງງານໃນການປົກຄອງຂອງຕົນ ເພື່ອກຳນົດຄ່າແຮງງານ ແລະ ສະຫວັດດີການໃຫ້ພະນັກງານ ກຳມະກອນຢູ່ໃນຫົວໜ່ວຍທຸລະກິດຂອງຕົນ.

มາດຕາ 3. ເງື່ອນໄຂໃນການສ້າງຕັ້ງພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ

3.1. ພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ ຕ້ອງມີທີ່ຕັ້ງຢູ່ສະຖານທີ່ເໝາະສົມ, ກ້ວາງຂວາງ, ມີບ່ອນຈອດລົດພຽງພໍ ສະເພາະທີ່ຕັ້ງສວນອາຫານຕ້ອງມີທິວທັດທຳມະຊາດສວຍງາມ ແລະ ບັນຍາກາດທີ່ຮົ່ມເຢັນ ເໝາະສົມກັບການພັກຜ່ອນຢ່ອນອາລົມຂອງຄົນທົ່ວໄປທັງພາຍໃນ ແລະ ຕ່າງປະເທດ.

3.2. ພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ ທີ່ມີລະດັບມາດຕະຖານປະກອບດ້ວຍ: ຕຶກ, ອາຄານ ທີ່ມີການອອກແບບຢ່າງສວຍງາມ, ມີໂຄງສ້າງແໜ້ນໜາຖາວອນ, ມີລະບົບລະບາຍອາກາດທີ່ດີ, ລະບົບບຳບັດນ້ຳເສຍ, ມີສິ່ງກັ້ງບັງບໍ່ໃຫ້ສ້າງຄວາມລຳຄານ ແລະ ລົບກວນຕໍ່ພາຍນອກ,ມີຫ້ອງອາຫານທີ່ ກວ້າງຂວາງໂອ່ໂຖງດີ ແລະ ອາດມີຫ້ອງອາຫານນ້ອຍແຍກສ່ວນສະເພາະ ເພື່ອຮອງຮັບ ແຂກລະດັບສູງ. ການຕົບແຕ່ງປະດັບປະດາ ທັງພາຍໃນ ແລະ ພາຍນອກ ໃຫ້ມີຄວາມກົມກຽນກັນ ລະຫວ່າງ ເອກະລັກຂອງຊາດ ແລະ ສາກົນ ພ້ອມທັງປະກອບສິ່ງອຳນວຍຄວາມສະດວກ ທີ່ໄດ້ລະດັບມາດຕະຖານ.

3.3. ນອກຈາກຫ້ອງອາຫານແລ້ວ ພັດຕະຄານ, ສວນອາຫານ, ຮ້ານອາຫານ ແລະ ຮ້ານກິນດື່ມ ຕ້ອງມີລະບົບບໍລິການ,ຕ້ອງມີຫ້ອງນ້ຳຍິງ, ຫ້ອງນ້ຳຊາຍ ຕາມຄວາມເໝາະສົມ, ມີເຮືອນຄົວ( ຫ້ອງປຸງແຕ່ງອາຫານໂດຍສະເພາະ) ແລະ ຕ້ອງຢູ່ຫ່າງໄກຈາກຫ້ອງນ້ຳຢ່າງນ້ອຍ 10 ແມັດ, ມີບ່ອນເກັບມ້ຽນສິ່ງເສດເຫລືອ, ບ່ອນ ຖິ້ມຂີ້ເຫຍື້ອ, ມີອ່າງບຳບັດ ແລະ ຮ່ອງລະບາຍນ້ຳເປື້ອນ ທີ່ຖືກຕ້ອງຕາມຫລັກການອະນາໄມມີລະບົບປ້ອງກັນອັກຄີໄພ ແລະ ໄພສຸກເສີນທີ່ໄດ້ມາດຕະຖານ.

ມາດຕາ 4. ເງື່ອນໄຂໃນການປະກອບບຸກຄະລະກອນ

4.1. ເຈົ້າຂອງທຸລະກິດຕ້ອງສ້າງສັນຍາວ່າຈ້າງແຮງງານທຸກຄັ້ງໃນການປະກອບພະນັກງານເຂົ້າໃນທຸລະກິດບໍລິການຂອງຕົນແລະຂຶ້ນທະບຽນແຮງງານ ຢູ່ພະແນກແຮງງານສະຫວັດດີການສັງຄົມ ຂອງແຂວງ, ນະຄອນຫຼວງ, ມີໃບຢັ້ງຢືນກວດກາສຸຂະພາບຈາກການແພດ ແລະ ອື່ນໆ..

4.2. ພະນັກງານຕ້ອງມີບຸກຄະລິກທີ່ດີ ຍິ້ມແຍ້ມແຈ່ມໃສ ແລະ ໄດ້ຜ່ານການຝຶກອົບຮົມທາງດ້ານການ ບໍລິການ, ການປຸງແຕ່ງອາຫານ, ເຄື່ອງດື່ມ, ຕາມສາຍງານຂອງຕົນ, ສາມາດສື່ສານກັບລູກຄ້າດ້ວຍພາສາສາກົນໄດ້ເປັນຢ່າງດີ,ພ້ອມທັງຮັບປະກັນດ້ານກິລິຍາມາລະຍາດ(ຄຸນສົມບັດຂອງພະນັກງານບໍລິການ)

## ໝວດທີ II

## ວ່າດ້ວຍການຈັດຕັ້ງຄຸ້ມຄອງທຸລະກິດ ພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ

ມາດຕາ 5. ເພື່ອປະຕິບັດຫລັກການລວມສູນ ເປັນເອກະພາບ, ທັງຮັບປະກັນໄດ້ທາງດ້ານປະສິດທິຜົນຂອງການຄຸ້ມຄອງກວດກາຂອງຂະແໜງການກ່ຽວຂ້ອງ ຊຶ່ງແບ່ງຂັ້ນຄຸ້ມຄອງອອກເປັນດັ່ງນີ້: ຂັ້ນສູນກາງ, ແຂວງ, ນະຄອນຫລວງ ແລະ ເມືອງ .

5.1. ຂັ້ນສູນກາງ:

ມີບົດບາດຊີ້ນຳ,ກວດກາການປະຕິບັດໜ້າທີ່ດ້ານວິຊາການຂອງຂັ້ນແຂວງ, ນະຄອນຫຼວງ ແລະ ທ້ອງຖິ່ນໄດ້ ໃນການຈັດຕັ້ງປະຕິບັດລະບຽບ ແລະ ຂໍ້ກຳນົດກົດໝາຍຕ່າງໆ ພ້ອມທັງສາມາດພິຈາລະນາອະນຸມັດອອກໃບດຳເນີນທຸລະກິດ ໃຫ້ແກ່ຫົວໜ່ວຍທຸລະກິດບໍລິການພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານ ກິນດື່ມ ທີ່ມີການລົງທຶນພາຍໃນແລະຕ່າງປະເທດ ດ້ວຍມູນຄ່າການລົງທຶນ ຕັ້ງແຕ່ *1.000. 000.000* ກີບ ( ໜຶ່ງຕື້ ກີບ ) ຂື້ນໄປ .

5.2. ຂັ້ນແຂວງ / ນະຄອນຫລວງ

5.2.1 ສະເພາະນະຄອນຫລວງວຽງຈັນ , ສະຫວັນນະເຂດ, ຈຳປາສັກ, ຫລວງພະບາງ ແລະ ແຂວງຄຳມ່ວນ ທີ່ ທຸລະກິດບໍລິການທ່ອງທ່ຽວມີການຂະຫຍາຍຕົວຢ່າງໄວ, ມີບົດບາດຊີ້ນຳ, ຄຸ້ມຄອງກວດກາ, ພິຈາລະນາອະນຸ ມັດ, ໂຈະ ແລະ ຍຸບເລີກ ທຸລະກິດ ພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ ທີ່ມີການລົງທຶນ ພາຍໃນ ແລະ ຕ່າງປະເທດ ດ້ວຍມູນຄ່າ ຕັ້ງແຕ່ *80.000.000 ກີບ* (ແປດສິບລ້ານກີບ) ເຖິງ *1.000.000.000 ກີບ* (ໜຶ່ງຕື້ ກີບ) ໂດຍ ແມ່ນຄະນະນຳຂອງນະຄອນຫລວງວຽງຈັນ,ສະຫວັນນະເຂດ,ຈຳປາສັກ, ຫຼວງພະບາງ ແລະ ແຂວງ ຄຳມ່ວນ ເປັນຜູ້ພິຈາລະນາອະນຸມັດ ຕາມການສະເໜີຂອງ ພະແນກ / ຫ້ອງການ ທ່ອງທ່ຽວ ນະຄອນຫລວງວຽງ ຈັນ , ສະຫວັນນະເຂດ , ຈຳປາສັກ , ຫຼວງພະບາງ ແລະ ແຂວງ ຄຳມ່ວນ .

5.2.2 : ຂັ້ນເມືອງ

ທີ່ຂື້ນກັບ 05 ແຂວງຂ້າງເທິງ ມີໜ້າທີ່ກວດກາ, ຄຸ້ມຄອງ ແລະ ພິຈາລະນາອະນຸມັດ,ໂຈະ ຫລື ຍຸບເລີກທຸລະກິດ , ຮ້ານອາຫານ , ສວນອາຫານ ແລະ ຮ້ານກິນດື່ມ ທີ່ມີ ການລົງທຶນ 80.000.000 ກີບ ( ແປດສິບລ້ານກີບ ) ລົງມາ, ໂດຍຜ່ານ ຄຳເຫັນດີ ຂອງ ຄະນະນຳເມືອງ ; ຕາມການສະເໜີຂອງ ຫ້ອງການ / ໜ່ວຍງານ ທ່ອງທ່ຽວ ປະຈຳເມືອງ .

5.3 *ບັນດາແຂວງອື່ນໆ ທີ່ ທຸລະກິດບໍລິການທ່ອງທ່ຽວ ຂະຫຍາຍຕົວຊ້າ :*

5.3.1 *ແຂວງ* ມີບົດບາດຊີ້ນຳ,ກວດກາ,ຄຸ້ມຄອງ ແລະ ພິຈາລະນາອະນຸມັດ,ໂຈະ ຫລື ຍຸບເລີກ ຫົວໜ່ວຍທຸລະກິດ .

ພັດຕະຄານ, ຮ້ານອາຫານ , ສວນອາຫານ ແລະ ຮ້ານກິນດື່ມ ທີ່ ມີການລົງທຶນ ພາຍໃນ ແລະ ຕ່າງປະເທດ ທີ່ມີ ມູນຄ່າການລົງທຶນ ຕັ້ງແຕ່ *40.000.000 ກີບ* ( ສີ່ສິບລ້ານກີບ) ຂື້ນໄປ ຈົນເຖິງ ມູນ ຄ່າການລົງທຶນ *700.000.000* ( ເຈັດຮ້ອຍລ້ານກີບ ), ໂດຍຜ່ານການເຫັນດີຈາກຄະນະນຳ ແຂວງ ຕາມການສະເໜີຂອງ ພະແນກ / ຫ້ອງການ ທ່ອງທ່ຽວປະຈຳບັນດາແຂວງ.

5.3.2 *ເມືອງ* ມີບົດບາດຊີ້ນຳ,ກວດກາ,ຄູ້ມຄອງ ແລະ ຕົກລົງອະນຸມັດ,ໂຈະ ຫລື ຍຸບເລີກ ຫົວໜ່ວຍ ທຸລະກິດ ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ ທີ່ ມີການລົງທຶນ ພາຍໃນ ມູນຄ່າ *40.000.000 ກີບ* (ສີ່ສິບລ້ານກີບ) ລົງມາ, ໂດຍຜ່ານການເຫັນດີ ຈາກຄະນະນຳເມືອງຕາມ ການສະເໜີ ຂອງ ຫ້ອງການ / ໜ່ວຍງານທ່ອງທ່ຽວປະຈຳບັນດາເມືອງ.

## *ໝວດທີ III*

## ສິດ ແລະ ໜ້າທີ່

## ຂອງພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ

ມາດຕາ 6. ທຸລະກິດພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ ທີ່ໄດ້ຮັບອະນຸຍາດ ແລະ ເຄື່ອນໄຫວ ຖືກຕ້ອງ ມີສິດ ແລະ ໜ້າທີ່ດັ່ງນີ້:

6.1. ໃຫ້ການບໍລິການອາຫານ ແລະ ເຄື່ອງດື່ມທີ່ມີຄູນນະພາບ, ສະອາດຖືກຫຼັກອານາໄມ, ປອດໄພແກ່ສຸຂະພາບ ແລະ ຊີວິດຂອງລູກຄ້າ ໂດຍຖືກຕ້ອງຕາມຫຼັກວິຊາການ ແລະ ດ້ວຍລາຄາທີ່ສົມເຫດສົມຜົນ.

6.2. ຮັບປະກັນການປຸງແຕ່ງ, ການເກັບຮັກສາອາຫານ ແລະ ເຄື່ອງດື່ມ ໃຫ້ຖືກຕ້ອງຕາມຫຼັກສຸກຂະອານາໄມ ແລະ ຫຼັກວິຊາການສະເພາະ.

6.3. ຮັບປະກັນການບໍລິການດ້ວຍມາລະຍາດທ່າທີອ່ອນຫວານ, ນົບນອບ ມີອັດທະຍາໄສທີ່ດີ ຕາມເອກະລັກ ຮີດຄອງປະເພນີ ວັດທະນະທຳ ຂອງປະຊາຊົນບັນດາເຜົ່າ.

6.4. ຮັບປະກັນຄວາມສະອາດງາມຕາ, ເປັນລະບຽບຮຽບຮ້ອຍໃນສະຖານທີ່ຫ້ອງອາຫານ, ຫ້ອງຄົວ, ບໍລິເວນອ້ອມຮອບດ້ານນອກ,ມີການປະດັບປະດາ ທີ່ສວຍງາມດ້ວຍເອກະລັກແລະເຄື່ອງຫັດຖະກຳຂອງລາວ

6.5. ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ຄວາມສະຫງົບປອດໄພໃນສະຖານທີ່ຂອງຕົນ, ຮັກສາ ແລະ ເຄົາລົບຮີດຄອງປະເພນີ, ວັດທະນະທຳອັນດີງາມຂອງຊາດ.

6.6. ປະຕິບັດລະບຽບກົດໝາຍຂອງບ້ານເມືອງ, ຂໍ້ກຳນົດລະບຽບການ ຂອງຂະແໜງການທີ່ກ່ຽວຂ້ອງ, ປະຕິບັດພັນທະງົບປະມານ ຕາມເວລາ, ຕາມລະບຽບການ ແລະ ເປັນລະບົບ.

6.7. ມີໜ້າທີ່ສ້າງບຸກຄະລາກອນຂອງຕົນໃຫ້ນັບມື້ມີການພັດທະນາທາງດ້ານວິຊາສະເພາະ, ດ້ານພາສາ, ສຶກສາອົບຮົມໃຫ້ເຄົາລົບນັບຖືວັດທະນະທຳ, ຈາລີຍະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ການນຸ່ງຖືເປັນລະບຽບຮຽບຮ້ອຍ, ມີເອກະລັກຂອງຊາດ ແລະ ແບບສະເພາະຂອງທຸລະກິດຕົນ ທີ່ຈົບງາມ ຮຽບຮ້ອຍ ແລະ ປະຕິບັດ ລະບຽບກົດໝາຍ .

6.8. ປະຕິບັດໂມງເວລາ ເປີດ - ປິດ ຕາມລະບຽບການປະກາດໃຊ້ ແຕ່ລະໄລຍະ, ພ້ອມທັງປະຕິບັດລະບຽບການພາຍໃນຂອງຕົນຢ່າງເຂັ້ມງວດ.

6.9. ມີສິດເພີ່ມເຕີມທຶນຈົດທະບຽນຂອງຕົນຕາມຄວາມສາມາດ ພ້ອມທັງມີສິດໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນຕາມກົດໝາຍແຫ່ງ ສປປ ລາວ.

6.10. ຈະຕ້ອງມີປ້າຍບອກທາງ, ປ້າຍເຕືອນ, ປ້າຍຫ້າມ ແລະ ປ້າຍສັນຍາລັກອື່ນໆ ທີ່ເປັນພາສາລາວ ແລະ ພາສາສາກົນເພື່ອອຳນວຍຄວາມສະດວກແລະຮັບປະກັນຄວາມປອດໄພໃນຊີວິດ ແລະຊັບສິນຂອງຜູ້ບໍລິໂພກ

6.11. ລາຍການອາຫານຈະຕ້ອງເປັນຊື່ອາຫານລາວ ຫຼື ພາສາ ສາກົນ ແລະ ມີການແຈ້ງລາຄາ.

## *ໝວດທີ IV*

## ວ່າດ້ວຍເງື່ອນໄຂ, ຂໍອະນຸຍາດລົງທຶນສ້າງຕັ້ງ ແລະ ດຳເນີນທຸລະກິດພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ

ມາດຕາ 7. ບຸກຄົນ ຫລື ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ ສາມາດຂໍອະນຸຍາດດຳເນີນທຸລະກິດພັດຕະຄານ ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມຕາມເງື່ອນໄຂຂໍ້ຕົກລົງສະບັບນີ້, ເວັ້ນເສັຍ ແຕ່ບຸກຄົນທີ່ກົດໝາຍບໍ່ອະນຸຍາດໃຫ້.

ມາດຕາ 8. ຂໍ້ຕົກລົງສະບັບນີ້ບໍ່ອະນຸຍາດໃຫ້ບຸກຄົນ ຫລື ນິຕິບຸກຄົນໃດທີ່ຂາດສະຕິສຳປະສັນຍະ, ເສຍຈິດ, ຖືກສານຕັດອິດສະລະພາບແຕ່ 3 ເດືອນຂຶ້ນໄປຍ້ອນສາເຫດອາສະຍາກຳ, ສໍ້ໂກງທາງດ້ານເສດຖະກິດ, ລັກຊັບ,ຕົວະຍົວະລອກລວງ, ຂາຍປະເວນີ, ຢູ່ໃນໄລຍະລໍຖ້າ ຫລື ກຳລັງດຳເນີນຄະດີ ແລະ ບໍ່ບັນລຸນິຕິພາວະ.

ມາດຕາ 9. ບຸກຄົນ ຫລື ນິຕິບຸກຄົນ ພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຕ້ອງການ ຂໍອະນຸຍາດສ້າງຕັ້ງທຸລະກິດພັດຕະຄານ,ຮ້ານອາຫານ,ສວນອາຫານ ແລະ ຮ້ານກິນດື່ມ ຕ້ອງປະກອບເອກະສານຕາມຂັ້ນຕອນດັ່ງນີ້:

9.1 ເອກະສານຂໍອະນຸຍາດລົງທຶນສ້າງຕັ້ງປະກອບມີດັ່ງນີ້:

| | | |
|---|---|---|
| 01. | ໃບຄຳຮ້ອງ ຂໍລົງທຶນສ້າງຕັ້ງທຸລະກິດ | 3 ສະບັບ |
| 02. | ໃບຕາດິນ(ຫຼືລາຍລະອຽດຂອງການນຳໃຊ້ທີ່ດິນ ຫຼື ອາຄານ)ພ້ອມທັງໃບມອບສິດ | 3 ສະບັບ |
| 03. | ໃບຢັ້ງຢືນທີ່ຢູ່ບໍ່ກາຍ 3 ເດືອນ, ບັດປະຈຳຕົວ, ຢ່າງລະ | 3 ສະບັບ |
| 04. | ບັດຕ່າງດ້າວ ຫລື (Passport), ໃບອະນຸຍາດລົງທຶນ (ສຳລັບຄົນຕ່າງປະເທດ) | 3 ສະບັບ |
| 05. | ໃບຊີວະປະຫວັດຫຍໍ້ ຜູ້ຂໍລົງທຶນ | 3 ສະບັບ |
| 06. | ໃບແຈ້ງໂທດເລກທີ 3 ຈາກສານປະຊາຊົນ (ບໍ່ກາຍ 3 ເດືອນ) | 3 ສະບັບ |
| 07. | ບົດວິພາກເສດຖະກິດ | 3 ສະບັບ |
| 08. | ໃບອະນຸຍາດ ແລະ ແຜນຜັງການປຸກສ້າງ ຫລື ສ້ອມແປງ, ຕໍ່ເຕີມອາຄານ | 3 ສະບັບ |
| 09. | ໃບຢັ້ງຢືນຖານະການເງິນ | 3 ສະບັບ |

* *ຄຳຮ້ອງຂໍອະນຸຍາດລົງທຶນສ້າງຕັ້ງດັ່ງກ່າວຂ້າງເທິງ ແມ່ນຕ້ອງຍື່ນຕາມຂັ້ນການລົງທຶນ ໃນມາດຕາ 05 ຂອງ ຂໍ້ຕົກລົງສະບັບນີ້.*

9.2. ເອກະສານຂໍອະນຸຍາດດຳເນີນທຸລະກິດ ຕ້ອງປະກອບມີດັ່ງນີ້:

| | | |
|---|---|---|
| 01. | ໃບຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ | 3 ສະບັບ |

02. ສຳເນົາໃບອະນຸຍາດລົງທຶນສ້າງຕັ້ງທຸລະກິດ 3 ສະບັບ

03. ໃບອະນຸຍາດການປຸກສ້າງ ຫຼື ສ້ອມແປງຕໍ່ເຕີມອາຄານ 3 ສະບັບ

04. ສັນຍາເຊົ່າ/ຊື້ ທີ່ດິນປຸກສ້າງ ຫຼື ອາຄານ ແລະ ສິ່ງຂອງຕ່າງໆ 3 ສະບັບ

05. ກົດລະບຽບພາຍໃນວິສາຫະກິດ / ກົດລະບຽບວິສະຫະກິດຫຸ້ນສ່ວນ ( ຖ້າແມ່ນວິສະຫະກິດຫຸ້ນສ່ວນ ) 3 ສະບັບ

06. ບັນຊີເງິນຝາກທະນາຄານ, ບັນຊີຊັບສິນບັດລະອຽດ ຢ່າງລະ 3 ສະບັບ

07. ໃບຢັ້ງຢືນສຸຂະພາບ ແລະ ຊີວະປະຫວັດຂອງພະນັກງານທັງໝົດ, ຄົນລະ 3 ສະບັບ

08. ໃບປະກັນໄພທຸລະກິດ 3 ສະບັບ

09. ໃບສັນຍາແຮງງານ 3 ສະບັບ

10. ບົດບັນທຶກການກວດກາຄັ້ງສຸດທ້າຍຂອງຄະນະກຳມະການສະເພາະກິດໃນແຕ່ລະດັບຂັ້ນການລົງທຶນ ແລະ ການຄຸ້ມຄອງ 3ສະບັບ

- *ຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດດັ່ງກ່າວຂ້າງເທິງ ແມ່ນຕ້ອງຍືນຕາມຂັ້ນການລົງທຶນ ໃນມາດຕາ 05 ຂອງ ຂໍ້ຕົກລົງສະບັບນີ້.*

**ມາດຕາ 10.** ໃບອະນຸຍາດດຳເນີນທຸລະກິດພັດຕະຄານ, ຮ້ານອາຫານ, ສວນອາຫານແລະ ຮ້ານກິນດື່ມ ມີອາຍຸການນຳໃຊ້ 2 ປີ.

**ມາດຕາ 11.** ເອກະສານຄຳຮ້ອງຂໍຕໍ່ໃບອະນຸຍາດດຳເນີນທຸລະກິດປະກອບມີດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດສືບຕໍ່ດຳເນີນທຸລະກິດບໍລິການພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ
2. ໃບຢັ້ງຢືນການເສັຍອາກອນຂອງປີຜ່ານມາ.
3. ສຳເນົາໃບທະບຽນອາກອນ, ທະບຽນທຸລະກິດ ແລະ ໃບປະກັນໄພທຸລະກິດ.
4. ໃບສະຫລຸບບັນຊີຊັບສິນບັດ ແລະ ໃບດຸ່ນດ່ຽງບັນຊີ.

* *ຄຳຮ້ອງຂໍຕໍ່ໃບອະນຸຍາດດຳເນີນທຸລະກິດດັ່ງກ່າວຂ້າງເທິງ ແມ່ນຕ້ອງຍືນຕາມຂັ້ນການລົງທຶນ ໃນມາດຕາ 05ຂອງ ຂໍ້ຕົກລົງສະບັບນີ້.*

## ໝວດທີ V

## ວ່າດ້ວຍການກວດກາພັດຕະຄານ ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ

**ມາດຕາ 12.** ເຈົ້າຂອງທຸລະກິດພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ ຕ້ອງໃຫ້ການຮ່ວມມືເປັນຢ່າງດີ ແກ່ເຈົ້າໜ້າທີ່ກ່ຽວຂ້ອງ ໃນການລົງປະຕິບັດໜ້າທີ່ກວດກາກວດການ ແຕ່ລະຄັ້ງຕາມມາດຕາ 12, 13 ແລະ 14 ຂອງຂໍ້ຕົກລົງສະບັບນີ້. ການປະຕິເສດ ແລະ ບໍ່ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ເທົ່າທີ່ຄວນ ຈະຖືກປະຕິບັດມາດຕະການຕາມກົລະນີໜັກ ຫລື ເບົາ ຕາມລະບຽບກົດໝາຍທີ່ລັດປະກາດໃຊ້.

ມາດຕາ 13 ຄະນະກຳມະການກວດກາ-ກວດການສະເພາະກິດ ຂັ້ນສູນກາງແມ່ນ ລັດຖະມົນຕີ, ປະທານອົງການທ່ອງທ່ຽວແຫ່ງຊາດ ເປັນຜູ້ແຕ່ງຕັ້ງ ຊຶ່ງ ປະກອບດ້ວຍດັ່ງນີ້:

1. ກົມຄຸ້ມຄອງທຸລະກິດທ່ອງທ່ຽວ ແລະ ໂຮງແຮມ, ອົງການທ່ອງທ່ຽວແຫ່ງຊາດ.
2. ກົມຕຳຫຼວດທ່ອງທ່ຽວ.
3. ກົມຄຸ້ມຄອງອາຫານ ແລະ ຢາ ແລະ/ຫຼື ກົມອະນາໄມ, ກະຊວງສາທາລະນະສຸກ.
4. ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ.
5. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

ຄະນະກຳມະການກວດກາ ກວດການສະເພາະກິດ ສາມາດພົວພັນນຳເຈົ້າໜ້າທີ່ປະຈຳແຂວງ, ນະຄອນຫລວງວຽງຈັນ ຫລື ເມືອງທີ່ກ່ຽວຂ້ອງ ເພື່ອດຳເນີນການເຄື່ອນໄຫວ ວຽກງານຢ່າງມີປະສິດທິຜົນ, ສົມທົບກັບຂະແໜງການກ່ຽວຂ້ອງ ເພື່ອຊ່ວຍປະຕິບັດວານໃຫ້ບັນລຸຜົນຕາມເປົ້າໝາຍ.

ມາດຕາ 14. ຄະນະກຳມະການກວດກາ ກວດການ ພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມຂັ້ນແຂວງ, ນະຄອນຫຼວງ ຖືກແຕ່ງຕັ້ງໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫລວງວຽງຈັນ, ໂດຍ ການສະເໜີຂອງ ພະແນກ / ຫ້ອງການ ທ່ອງທ່ຽວ ແຂວງ ແລະ ນະຄອນຫຼວງ ຊຶ່ງຄະນະກຳມະການດັ່ງກ່າວປະກອບດ້ວຍດັ່ງນີ້:

1. ພະແນກ / ຫ້ອງການ ທ່ອງທ່ຽວປະຈຳແຂວງ, ນະຄອນຫລວງວຽງຈັນ.
2. ພະແນກການຄ້າປະຈຳແຂວງ, ນະຄອນຫລວງວຽງຈັນ.
3. ກອງບັນຊາການ ປກສ ປະຈຳແຂວງ, ນະຄອນຫລວງວຽງຈັນ.
4. ພະແນກການເງິນປະຈຳແຂວງ, ນະຄອນຫລວງວຽງຈັນ.
5. ພະແນກສາທາລະນະສຸກປະຈຳແຂວງ, ນະຄອນຫລວງວຽງຈັນ.
6. ພະແນກຖະແຫລງຂ່າວ ແລະ ວັດທະນະທຳປະຈຳແຂວງ, ນະຄອນຫລວງວຽງຈັນ.
7. ພະແນກແຮງງານ ແລະ ສະຫວັດດີການສັງຄົມປະຈຳແຂວງ, ນະຄອນຫລວງວຽງຈັນ.
8. ພະແນກຄົມມະນາຄົມຂົນສົ່ງ - ໄປສະນີ ແລະ ກໍ່ສ້າງປະຈຳແຂວງ, ນະຄອນຫລວງວຽງຈັນ.
9. ຫ້ອງການ ທ່ອງທ່ຽວ ປະຈຳເມືອງ ທີ່ ກ່ຽວຂ້ອງ.
10. ອຳນາດການປົກຄອງບ້ານປະຈຳເມືອງທີ່ກ່ຽວຂ້ອງ.

ມາດຕາ 15. ການກວດກາ ກວດການ ຕ້ອງເຄື່ອນໄຫວຕາມກໍລະນີດັ່ງຕໍ່ໄປນີ້:

1. ກວດກາປະຈຳປີຕາມປົກກະຕິ ປີລະ 1 ຄັ້ງ ໂດຍຖືເອົາ ເດືອນມັງກອນ (ເດືອນ 1) ຂອງທຸກໆປີ
2. ມີຄຳສັ່ງຈາກ ແຂວງ, ນະຄອນຫລວງວຽງຈັນ ຫລື ອົງການທ່ອງທ່ຽວແຫ່ງຊາດ.
3. ຕາມການສະເໜີ ຂອງ ປະຊາຊົນ, ນາຍບ້ານ ແລະ ເມືອງທີ່ກ່ຽວຂ້ອງ.
4. ຕາມການສະເໜີຂອງກະຊວງ, ອົງການແຫ່ງລັດທີ່ກ່ຽວຂ້ອງ.
5. ຕາມການສະເໜີຂອງເຈົ້າຂອງທຸລະກິດທີ່ກ່ຽວຂ້ອງ
6. ກວດກາການຈັດຕັ້ງປະຕິບັດ ຜົນການກວດກາ ຜ່ານມາ.

# ໝວດທີ VI

## ວ່າດ້ວຍຂໍ້ຫ້າມ ແລະ ມາດຕະການ

ມາດຕາ 16. ບັນດາຂໍ້ຫ້າມ.

1. ຫ້າມດຳເນີນການທຸລະກິດພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມກ່ອນໄດ້ຮັບອະນຸຍາດຢ່າງເດັດຂາດ.
2. ຫ້າມສ້າງຕັ້ງພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ ໃນສະຖານທີ່ທາງການຕ້ອງຫ້າມ, ສະຖານທີ່ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສະຖານທີ່ໃກ້ວັດ ແລະ ໃກ້ໂຮງຮຽນ.
3. ຫ້າມພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ ຈັດຕັ້ງການຊຸມນຸມທີ່ຜິດຕໍ່ກົດໝາຍ, ຈັດຕັ້ງບ່ອນຫລິ້ນການພະນັນທຸກປະເພດ ແລະ ບ່ອນມົ່ວສຸມຢາເສບຕິດທຸກປະເພດຢູ່ພາຍໃນສະຖານທີ່ຂອງຕົນ ແລະ ບ່ອນອື່ນໆ.
4. ຫ້າມພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ ບໍລິການເຫຼົ້າ ຫລື ຂອງມຶນເມົາໃຫ້ບຸກຄົນທີ່ມີອາການມຶນເມົາຢູ່ແລ້ວ, ຄົນບ້າ, ໃບ້, ເສັຍຈິດ ແລະ ເດັກອາຍຸຕໍ່າກ່ວາ 18 ປີ ຢ່າງເດັດຂາດ.
5. ຫ້າມພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ ອະນຸຍາດໃຫ້ບຸກຄົນອື່ນ ຫຼື ດຳເນີນການດ້ວຍຕົນເອງ ຂາຍປະເວນີດ້ວຍຮູບການຕ່າງໆ ຢູ່ສະຖານທີ່ບໍລິການຂອງຕົນ.
6. ຫ້າມຮັບເອົາຄົນຕ່າງປະເທດເຂົ້າເຮັດວຽກໂດຍບໍ່ໄດ້ຮັບອະນຸຍາດ ຈາກກົມແຮງງານຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ຂະແໜງການທີ່ກ່ຽວຂ້ອງ.
7. ຫ້າມບໍ່ໃຫ້ພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ ດຳເນີນການບັນເທີງ ກ່ອນໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ.
8. ຫ້າມພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມທີ່ມີການບັນເທີງ ອະນຸຍາດໃຫ້ບຸກຄົນໃດໜຶ່ງນຳເອົາອາວຸດທຸກປະເພດເຂົ້າໄປໃນຮ້ານ ຫລື ສະຖານທີ່ດັ່ງກ່າວຢ່າງເດັດຂາດ.
9. ຫ້າມບໍ່ໃຫ້ພະນັກງານໃນພັດຕະຄານ,ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ ນຸ່ງຖືແບບບໍ່ສຸພາບ, ສັ້ນ, ເຂີນ ຫລື ມີລັກສະນະຍົວະຍົງໄປໃນທາງການມະລົມ.

ມາດຕາ 17. ການປະຕິບັດມາດຕະການ, ບຸກຄົນ ຫລື ນິຕິບຸກຄົນ ທີ່ເປັນເຈົ້າຂອງພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ຈະຖືກປະຕິບັດມາດຕະການຕາມກໍລະນີໜັກ ຫລື ເບົາດັ່ງນີ້:

1. ສຶກສາອົບຮົມ.
2. ຕັກເຕືອນດ້ວຍຈົດໝາຍທາງການ.
3. ຕັກເຕືອນ ແລະ ປັບໃໝ
4. ປັບໃໝ ແລະ ໂຈະການດຳເນີນທຸລະກິດ.
5. ປັບໃໝ, ຖອນໃບອະນຸຍາດດຳເນີນທຸລະກິດ ແລະ ຮ້ອງຟ້ອງຂຶ້ນສານ.

ມາດຕາ 18. ພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ ຈະຖືກສຶກສາອົບຮົມ ແລະ ຕັກເຕືອນດ້ວຍຈົດໝາຍທາງການ ເນື່ອງຈາກມີການເປີດດໍາເນີນທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດຢ່າງເປັນທາງການ, ຜູ້ທີ່ມີອະນຸຍາດຖືກຕ້ອງ ແຕ່ມີການເຄື່ອນໄຫວທຸລະກິດ ແລະ ການບໍລິການທີ່ບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບຫລັກການ ແລະ ລະບົບການຄຸ້ມຄອງຂອງພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ, ຂາດຫລັກອານາໄມ ແລະ ການຮັກສາຄວາມປອດໄພ, ຂາດຈັນຍາບັນ ແລະ ການບໍລິການເປັນຕົ້ນ. ພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ ຈະຕ້ອງແກ້ໄຂຄວາມຜິດພາດ ແລະ ຄວາມຂາດຕົກບົກຜ່ອງຂອງຕົນຕາມກໍານົດເວລາທີ່ທາງເຈົ້າໜ້າທີ່ກ່ຽວຂ້ອງ ໄດ້ແຈ້ງໃຫ້ຊາບໃນໃບຕັກເຕືອນ.

ມາດຕາ 19. ພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມຈະຖືກຕັກເຕືອນ, ປັບໃໝ ຫລື ສັ່ງໂຈະການດໍາເນີນທຸລະກິດເນື່ອງຈາກ :

1. ບໍ່ປະຕິບັດຕາມຄໍາຕັກເຕືອນຄັ້ງທີ 1 ຢ່າງຄົບຖ້ວນຕາມກໍານົດເວລາ, ທຸລະກິດດັ່ງກ່າວຈະຖືກປັບໃໝມູນຄ່າ *500.000 ກີບ*.
2. ພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ ທີ່ບໍລິການເຫົ້າ ຫລື ເຄື່ອງດື່ມມຶນເມົາໃຫ້ບຸກຄົນທີ່ມີອາການມຶນເມົາຢູ່ແລ້ວ ແລະ ເດັກອາຍຸຕໍ່າກ່ວາ 18 ປີ, ຄົນບ້າໃບ້ ເສັຍຈິດ, ຂາດຫລັກອະນາໄມຄວາມປອດໄພ , ສ້າງຄວາມເສຍຫາຍແກ່ສະພາບແວດລ້ອມ ແລະ ບໍ່ມີຈັນຍາທໍາບໍລິການ ອາຫານເບື່ອເປັນພິດ ຈະຖືກຕັກເຕືອນປັບໃໝບໍ່ເກີນ *1.500.000 ກີບ*.
3. ພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ ທີ່ຖືກຕັກເຕືອນ ປັບໃໝຄັ້ງທີ 1 ແລ້ວແຕ່ຍັງບໍ່ປ່ຽນແປງແກ້ໄຂຈະຖືກປັບໃໝບໍ່ເກີນ *3.000.000 ກີບ* ແລະ ໂຈະການບໍລິ ການໄລຍະ 3 ເດືອນ ເພື່ອປັບປຸງ ແລະ ແກ້ໄຂໃຫ້ຖືກຕ້ອງສອດຄ່ອງກັບລະບຽບຫລັກການ ແລະ ກົດໝາຍຂອງບ້ານເມືອງ.
4. ພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ ທີ່ດໍາເນີນທຸລະກິດໂດຍບໍ່ໄດ້ຮັບອະນຸຍາດ ຫລື ໄດ້ຮັບອະນຸຍາດແລ້ວ ຫາກໃຊ້ສະຖານທີ່ຂອງຕົນເປັນບ່ອນຫລິ້ນການພະນັນ, ການຄ້າຂາຍຢາເສບຕິດ, ຂາຍປະເວນີ ຫລື ອະນຸຍາດໃຫ້ຄົນອື່ນກະທໍາຜິດໃນຮູບການຕ່າງໆ ຈະຖືກປັບໃໝບໍ່ເກີນ 5.000.000 ກີບ. ແລະ ຖືກກຮ້ອງຟ້ອງນໍາສົ່ງໃຫ້ສານຕັດສິນຕາມລະບຽບກົດໝາຍຂອງບ້ານເມືອງ ແລະ ຖອນໃບອະນຸຍາດດໍາເນີນທຸລະກິດ .

## ໝວດທີ VII

## ວ່າດ້ວຍການຈັດຕັ້ງປະຕິບັດ

ມາດຕາ 20. ຂໍ້ຕົກລົງສະບັບນີ້ມີຜົນຍ້ອນຫລັງຕໍ່ ບັນດາທຸລະກິດພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມທີ່ດໍາເນີນທຸລະກິດມາກ່ອນ ແລະ ໃຫ້ບັນດາຫົວໜ່ວຍທຸລະກິດທີ່ກ່ຽວຂ້ອງປະຕິບັດຕາມຂໍ້ຕົກລົງສະບັບນີ້ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຢ່າງເຂັ້ມງວດ.

ມາດຕາ 21. ບັນດາກະຊວງ, ທະບວງກົມ, ອົງການທຽບເທົ່າ ແລະ ທຸກພາກສ່ວນ ທຸກອົງການຈັດຕັ້ງໃນທົ່ວປະເທດມີໜ້າທີ່ປະສານງານ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງມີປະສິທິຜົນ.

ມາດຕາ 22. ບັນດາມະຕິ, ຄໍາສັ່ງ ແລະ ລະບຽບການຕ່າງໆກ່ຽວກັບທຸລະກິດພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມໃນເມື່ອກ່ອນ ທີ່ບໍ່ສອດຄ່ອງກັບເນື້ອໃນຂອງຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ມາດຕາ 23. ຂໍ້ຕົກລົງສະບັບນີ້ມີຜົນສັກສິດພາຍຫລັງ 30 ວັນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ,

ປະທານອົງການທ່ອງທ່ຽວແຫ່ງຊາດ

ສົມພົງ ມົງຄົນວິໄລ